| | |
|---|---|
| **ສະຖານທູດ ຫວຽດນາມ ປະຈຳລາວ** | **ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ** |
| **ຝ່າຍ ການຄ້າ** | **ເອກະລາດ - ສັນຕິພາບ - ວັດທະນາຖາວອນ** |

ເລກທີ: 129/TV.ĐSQLA

*ວຽງຈັນ, ວັນທີ 07 ກໍລະກົດ 2021*

**ຂໍຮຽນ: ສະພາການຄ້າ ແລະ ອຸດສາຫະກຳ ລາວ**

*ເລື່ອງ: ເຊື້ອເຊີນນັກທຸລະກິດ ລາວ ເຂົ້າຮ່ວມກອງປະຊຸມແລກປ່ຽນນັກທຸລະກິດສາກົນ ກ່ຽວກັບ ຜະລິດຕະພັນໝາກລຳໄຍ ຂອງຫວຽດນາມ ປີ 2021 (Vietnam International online Business matching conference on Longan products 2021).*

ທູດການຄ້າ ແຫ່ງສະຖານທູດ ຫວຽດນາມ ປະຈຳ ສ.ປ.ປ ລາວ ຂໍສະແດງຄວາມນັບຖືຢ່າງສູງ ແລະ ຂໍຖືເປັນກຽດຮຽນມາຍັງທາງອີງການ ເລື່ອງດັ່ງຕໍ່ໄປນີ້:

ກະຊວງອຸດສາຫະກຳ ແລະ ການຄ້າ ສ.ສ ຫວຽດນາມ ເປັນເຈົ້າພາບຈັດກອງປະຊຸມແລກປ່ຽນນັກທຸລະກິດສາກົນ ກ່ຽວກັບ ຜະລິດຕະພັນໝາກລຳໄຍ ຂອງຫວຽດນາມ ປີ 2021, ຈຸດປະສົງ ເພື່ອຈັດສັນນັກທຸລະກິດ ລະຫວ່າງປະເທດພົບປະທາງໄກ, ຊອກຫາຄູ່ຮ່ວມມື, ຜູ້ນຳເຂົ້າສົນໃຈກັບຜະລິດຕະພັນໝາກລຳໄຍ່ຂອງຫວຽດນາມ ລາຍລະອຽດຄືດັ່ງຕໍ່ໄປນີ້:

- ວັນເວລາຈັດງານ: ແຕ່ວັນທີ 15 - 16/7/2021.
- ຮູບການຈັດງານ: ກອງປະຊຸມທາງໄກ (online).
- ລາຍການຈັດງານ: ຕິດຄັດພ້ອມນີ້ (ພາສາອັງກິດ).
- ບັນຊີລາຍຊື່ນັກທຸລະກິດຫວຽດນາມເຂົ້າຮ່ວມງານ: ຕິດຄັດພ້ອມນີ້.
- ເວັບໄຊເຊື່ອມຕໍ່ສຳລັບຜູ້ລົງທະບຽນຮ່ວມງານ: https://forms.gle/aK5KrE6CJPrZeBwr9
- ປະສານຜູ້ຈັດງານ: ກົມສົ່ງເສີມການຄ້າ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຫວຽດນາມ (Email: foodexpo@ vietrade.gov.vn, vietnamfoodexpo@gmail.com).

ດັ່ງນັ້ນ, ທູດການຄ້າ ແຫ່ງ ສະຖານທູດ ຫວຽດນາມ ປະຈຳ ສ.ປ.ປ ລາວ ຂໍຖືເປັນກຽດ ສະເໜີມາຍັງທາງອີງການເພື່ອໃຫ້ການຮ່ວມມືເຊື້ອເຊີນນັກທຸລະກິດ ລາວ ຜູ້ສົນໃຈເຂົ້າຮ່ວມງານດັ່ງກ່າວ.

ລາຍລະອຽດຂໍຕິດຕໍ່ ປະສານຫາ ທູດການຄ້າ ຫວຽດນາມ ປະຈຳ ສ.ປ.ປ ລາວ *(Email: la@moit.gov.vn; Mobile: +8562095626868; +8562098682222).*

ຂໍສະແດງຄວາມຂອບໃຈຕໍ່ການຮ່ວມມື./.

***ບ່ອນສົ່ງ:***

- ຄືຂ້າງເທິງ;
- ສະຖານທູດຫວຽດນາມປະຈຳ ລາວ.

**ຫົວໜ້າທູດການຄ້າ**

**ເລ ທິ ເຟືອງ ຮວາ**